ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ກະສິກຳ ແລະ ປ່າໄມ້ ເລກທີ: 1882 /ກປ

ນະຄອນຫຼວງວຽງຈັນ, ວັນທີ 21 SEP 2020

# ຂໍ້ຕົກລົງ

## ວ່າດ້ວຍການສ້າງລະບົບຖານຂໍ້ມູນວຽກງານປົກປ້ອງສັງຄົມ ແລະ ສິ່ງແວດລ້ອມ ສໍາລັບແຜນງານຫຼຸດຜ່ອນ ທາດອາຍເຮືອນແກ້ວ ຈາກການທໍາລາຍປ່າໄມ້ ແລະ ເຮັດໃຫ້ປ່າໄມ້ຊຸດໂຊມ ຂອງ ສປປ ລາວ

- ອີງຕາມ ດໍາລັດຂອງນາຍົກລັດຖະມົນຕີ ເລກທີ 99/ນຍ, ລົງວັນທີ 9 ມີນາ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກະຊວງ ກະສິກໍາ ແລະ ປ່າໄມ້;
- ອີງຕາມ ການລົງນາມຂອງ ສປປ ລາວ ໃນສົນທິສັນຍາ ສະຫະປະຊາຊາດ ວ່າດ້ວຍການປ່ຽນແປງດິນຟ້າອາກາດ ສະບັບ ລົງວັນທີ 7 ກັນຍາ 2016;
- ອີງຕາມ ຂໍ້ຕົກລົງ ຂອງກອງປະຊຸມ ປະເທດພາຄີ ຄັ້ງທີ່ 17 ວ່າດ້ວຍຄໍາແນະນໍາ ກ່ຽວກັບລະບົບ ເພື່ອສະໜອງຂໍ້ມູນ ການແກ້ໄຂ ແລະ ເຄົາລົບການປົກປ້ອງສັງຄົມ ແລະ ສິ່ງແວດລ້ອມ;
- ອີງຕາມ ຂໍ້ຕົກລົງຂອງກອງປະຊຸມ ປະເທດພາຄີ ຄັ້ງວັນທີ 16 ທັນວາ 2010 ວັກທີ 71 ຂອງສົນທິສັນຍາ ສະຫະປະຊາຊາດ ວ່າດ້ວຍການປ່ຽນແປງດິນຟ້າອາກາດ;
- ອີງຕາມ ການລົງນາມຂອງ ສປປ ລາວ ໃນສົນທິສັນຍາ ສະຫະປະຊາຊາດ ວ່າດ້ວຍການປ່ຽນແປງດິນຟ້າອາກາດ ໃນວັນທີ 4 ມັງກອນ 1995.
- ອີງຕາມ ການຄົ້ນຄວ້າ ແລະ ນໍາສະເໜີຂອງກົມປ່າໄມ້ ສະບັບເລກທີ 4984/ກປມ, ລົງວັນທີ 18 ກັນຍາ 2020.

## ລັດຖະມົນຕີ ກະຊວງກະສິກໍາ ແລະ ປ່າໄມ້ ຕົກລົງ:

ມາດຕາ 1 ອະນຸມັດສ້າງລະບົບຖານຂໍ້ມູນ ວຽກງານປົກປ້ອງສັງຄົມ ແລະ ສິ່ງແວດລ້ອມແຫ່ງຊາດ ສໍາລັບວຽກງານຫຼຸດຜ່ອນ ທາດອາຍເຮືອນແກ້ວ ຈາກການທໍາລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ຊຸດໂຊມ ຂອງ ສປປ ລາວ.

ມາດຕາ 2 ໃຫ້ກົມປ່າໄມ້ ຄົ້ນຄ້ວາແຕ່ງຕັ້ງພະນັກງານ ຫຼື ທີມງານວິຊາການ ຂອງພະແນກການທີ່ກ່ຽວຂ້ອງ ຮັບຜິດ ຊອບ ໃນການສ້າງລະບົບຖານຂໍ້ມູນ ວຽກງານປົກປ້ອງສັງຄົມ ແລະ ສິ່ງແວດລ້ອມ ຕາມຄວາມເໝາະສົມ. ພ້ອມດຽວກັນນັ້ນ ໃຫ້ຊີ້ນໍາ ແລະ ຊຸກຍູ້ພະແນກ ກະສິກໍາ ແລະ ປ່າໄມ້ ແຂວງ ແລະ ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ ເປົ້າໝາຍແຕ່ງຕັ້ງພະນັກງານ ຫຼື ທີມງານວິຊາການ ຮັບຜິດຊອບວຽກງານດັ່ງຢູ່ແຕ່ລະຂັ້ນຕາມຄວາມ ເໝາະສົມ.

ມາດຕາ 3 ພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບ

- ຂັ້ນສູນກາງ:
  - ມີໜ້າທີ່ໃນການຄຸ້ມຄອງຂໍ້ມູນ, ປະສານງານ ກັບວິຊາການ ຫຼື ທີມງານຮັບຜິດຊອບ ຂັ້ນແຂວງ ແລະ ຂັ້ນເມືອງ ໃນການຈັດຕັ້ງປະຕິບັດແຜນ ແລະ ເຄື່ອງມືປົກປ້ອງສັງຄົມ ແລະ ສິ່ງແວດລ້ອມ;
  - ມີໜ້າທີ່ຮັບຜິດຊອບ ການຕິດຕາມ ການເຄື່ອນໄຫວວຽກງານ ຂອງວິຊາການ ຫຼື ທີມງານປົກປ້ອງ ສັງຄົມ ແລະ ສິ່ງແວດລ້ອມ ຂັ້ນແຂວງ ແລະ ຂັ້ນເມືອງ;

- ໃຫ້ການສະໜັບສະໜູນທາງດ້ານວິຊາການ ແລະ ຄວາມສາມາດ ໃຫ້ແກ່ພະນັກງານ ຫຼື ທີມງານວິຊາການ ທີ່ຮັບຜິດຊອບຢູ່ ຂັ້ນແຂວງ ແລະ ຂັ້ນເມືອງ;
- ປະສານສົມທົບກັບອົງການຈັດຕັ້ງທາງສັງຄົມ ໃນການສ້າງຄວາມເຂັ້ມແຂງ ແລະ ການມີສ່ວນຮ່ວມ ຂອງຊຸມຊົນທ້ອງຖິ່ນ;
- ຕິດຕາມກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ແຜນປົກປ້ອງສັງຄົມ ແລະ ສິ່ງແວດລ້ອມ;
- ມີໜ້າທີ່ໃນການສັງລວມ, ລາຍງານ ແລະ ສະເໜີຂໍ້ມູນ ກ່ຽວກັບວຽກງານປົກປ້ອງສັງຄົມ ແລະ ສິ່ງແວດລ້ອມ ໃຫ້ພາກສ່ວນທີ່ກ່ຽວຂ້ອງຕ່າງໆ ຂັ້ນສູນກາງ ແລະ ສາກົນ ທີ່ມີຄວາມຕ້ອງການ.

- ຂັ້ນແຂວງ ແລະ ຂັ້ນເມືອງ:
  - ມີໜ້າທີ່ໃນການຄຸ້ມຄອງຂໍ້ມູນ ແລະ ປະສານງານ ກັບພະແນກການທີ່ກ່ຽວຂ້ອງ ຂັ້ນແຂວງ ແລະ ຫ້ອງການທີ່ກ່ຽວຂ້ອງ ຂັ້ນເມືອງ ໃນການຈັດຕັ້ງປະຕິບັດແຜນ ແລະ ເຄື່ອງມື ປົກປ້ອງສັງຄົມ ແລະ ສິ່ງແວດລ້ອມ;
  - ມີໜ້າທີ່ຮັບຜິດຊອບ ໃນການຈັດຕັ້ງປະຕິບັດແຜນການ ຂອງວຽກງານປົກປ້ອງສັງຄົມ ແລະ ສິ່ງແວດລ້ອມ ຂັ້ນແຂວງ ແລະ ຂັ້ນເມືອງ;
  - ໃຫ້ການສະໜັບສະໜູນທາງດ້ານວິຊາການ ແລະ ຄວາມສາມາດ ໃຫ້ແກ່ພະນັກງານ ຫຼື ທີມງານວິຊາການ ທີ່ຮັບຜິດຊອບຢູ່ຂັ້ນເມືອງ;
  - ມີໜ້າທີ່ໃນການສັງລວມ, ສະເໜີຂໍ້ມູນ ກ່ຽວກັບວຽກງານປົກປ້ອງສັງຄົມ ແລະ ສິ່ງແວດລ້ອມ ໃຫ້ແກ່ພະແນກ ຫຼື ພາກສ່ວນທີ່ກ່ຽວຂ້ອງຕ່າງໆ ຂັ້ນແຂວງ ແລະ ຂັ້ນເມືອງ ທີ່ມີຄວາມຕ້ອງການ;
  - ຮ່ວມມື ແລະ ປະສານສົມທົບກັບອົງການຈັດຕັ້ງທາງສັງຄົມ ໃນການສ້າງຄວາມເຂັ້ມແຂງ ແລະ ການມີສ່ວນຮ່ວມ ຂອງຊຸມຊົນທ້ອງຖິ່ນ;
  - ຕິດຕາມກວດກາ, ປະເມີນຜົນ ແລະ ລາຍງານຜົນການຈັດຕັ້ງປະຕິບັດ ວຽກງານປົກປ້ອງສັງຄົມ ແລະ ສິ່ງແວດລ້ອມ ຂັ້ນແຂວງ ແລະ ຂັ້ນເມືອງ ແລະ ລາຍງານ ໃຫ້ພາກສ່ວນທີ່ກ່ຽວຂ້ອງຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນສູນກາງ.

ມາດຕາ 4 ມອບໃຫ້ກົມປ່າໄມ້ ແລະ ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ ແລະ ລາຍງານໃຫ້ຂັ້ນເທິງຊາບ ຕາມເວລາອັນຄວນ.

- ສໍາລັບງົບປະມານຕ່າງໆ ແມ່ນນໍາໃຊ້ຂອງ ໂຄງການ ຄູ່ຮ່ວມກາກບອນປ່າໄມ້ (FCPF).

ມາດຕາ 5 ຂໍ້ຕົກລົງສະບັບນີ້ ມີຜົນນໍາໃຊ້ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້**

ກະຊວງກະສິກຳ ແລະ ປ່າໄມ້ ລັດຖະມົນຕີ

ທອງພັດ ວົງມະນີ